ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມເຜີຍແຜ່ວຽກງານຂໍ້ມູນຂ່າວສານສິນເຊື່ອ




ໃນວັນທີ 23 ກັນຍາ 2022 ຜ່ານມານີ້, ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ໄດ້ຈັດກອງປະຊຸມເຜີຍແຜ່ວຽກງານຂໍ້ມູນຂ່າວສານສິນເຊື່ອຂຶ້ນ" ຢູ່ທີ່ກະຊວງປ້ອງກັນຄວາມສະຫງົບ ໂດຍການໃຫ້ກຽດເປັນປະທານຮ່ວມຂອງທ່ານ ນ. ວິນຄຳ ລຸນທອນ ຜູ້ອຳນວຍການ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ, ແລະ ທ່ານພົນຈັດຕະວາ ໝູຈອນ ກ້ອນທອງດຳ ຮອງຫົວໜ້າກົມໃຫຍ່ພະລາທິການ, ກະຊວງປ້ອງກັນຄວາມສະຫງົບ, ບັນດາຄະນະພັກ, ຄະນະກົມ, ພະແນກ ແລະ ພະນັກງານນັກຮົບ ທົ່ວກຳລັງປ້ອງກັນຄວາມສະຫງົບ, ຕາງໜ້າຈາກທະນາຄານແຫ່ງ ສປປ ລາວ ແລະ ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ເຂົ້າຮ່ວມທັງໝົດຈຳນວນ 50 ທ່ານ.





ຈຸດປະສົງຂອງການເຜີຍແຜ່ດຳລັດ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອໃນຄັ້ງນີ້, ກໍ່ແມ່ນເພື່ອໃຫ້ບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ໄດ້ຮັບຮູ້ເຂົ້າໃຈກ່ຽວກັບການເກັບກຳຂໍ້ມູນ ແລະ ພັດທະນາ

ວຽກງານຂໍ້ມູນຂ່າວສານສິນເຊື່ອ ຂອງ ສປປ ລາວ ເພື່ອສາມາດຕອບສະໜອງຂໍ້ມູນທີ່ຄົບຖ້ວນ, ມີຄຸນນະພາບ ໃຫ້ແກ່ບັນດາສະຖາບັນການເງິນ, ພາກລັດ ແລະ ສັງຄົມ ເພື່ອນຳໃຊ້ເຂົ້າໃນວຽກງານຕ່າງໆຢ່າງມີປະສິດທິພາບ.

ໃນກອງປະຊຸມດັ່ງກ່າວ ທ່ານ ນ. ເພັດລຳພອນ ຄ້ານໍເພັດ ຮອງຜູ້ອຳນວຍການ ບໍລິສັດ ຂສລ ໄດ້ນຳສະເໜີດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ລບ, ລົງວັນທີ 19 ກໍລະກົດ 2019. ໃຫ້ຮູ້ວ່າ: ເພື່ອເປັນການຈັດຕັ້ງປະຕິບັດຕາມດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ, ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ ແລະ ການປະເມີນຂອງທະນາຄານໂລກ ກ່ຽວກັບສະພາບການດຳເນີນທຸລະກິດ ຢູ່ ສປປ ລາວ ເຊິ່ງພາລະບົດບາດຂອງບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແມ່ນເຮັດໜ້າທີ່ໃນການເກັບກຳຂໍ້ມູນຈາກພາກສ່ວນຕ່າງໆ ທັງອົງການ ຈັດຕັ້ງລັດ ແລະ ບໍລິສັດ ສາທາລະນຸປະໂພກ. ພ້ອມດຽວກັນນັ້ນ, ກໍຕ້ອງດຳເນີນການຄົ້ນຄວ້າສ້າງຜະລິດຕະພັນທີ່ຫຼາກຫຼາຍຮັບໃຊ້ສັງຄົມ. ສະນັ້ນ, ເພື່ອປະຕິບັດຕາມຄຳສັ່ງ, ລະບຽບການກ່ຽວຂ້ອງ ແລະ ເພື່ອພັດທະນາວຽກງານຂໍ້ມູນຂ່າວສານສິນເຊື່ອ (ຂສລ) ຈຳເປັນຕ້ອງໄດ້ເກັບກຳຂໍ້ມູນຈາກພາກສ່ວນກ່ຽວຂ້ອງ ເພື່ອມາປັບປຸງຂໍ້ມູນຂ່າວສານສິນເຊື່ອໃຫ້ມີຄຸນນະພາບ ໂດຍສະເພາະການລະບຸຕົວຕົນຂອງລູກຄ້າເງິນກູ້ໃຫ້ມີຄວາມຊັດເຈນ ເນື່ອງຈາກປະຈຸບັນ ບໍລິສັດ ຂສລ ໄດ້ຮັບຂໍ້ມູນຂາເຂົ້າຈາກສະມາຊິກ ກໍຄື ທະນາຄານທຸລະກິດ ແລະ ສະຖາບັນການເງິນຈຸລະພາກ ພຽງຢ່າງດຽວ ແຕ່ຍັງຂາດຂໍ້ມູນຈາກພາກສ່ວນອື່ນມາປຽບທຽບໃຫ້ມີຄວາມຖືກຕ້ອງ ແລະ ມີຄຸນນະພາບ ເປັນຕົ້ນແມ່ນ ເລກບັດປະຈຳຕົວ ແລະ ເລກສຳມະໂນຄົວ ໃນການລະບຸຕົວຕົນຂອງລູກຄ້າ.

ການເຜີຍແຜ່ດຳລັດ ແລະ ວຽກງານຂໍ້ມູນຂ່າວສານສິນເຊື່ອດັ່ງກ່າວ ແມ່ນໄດ້ດຳໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດອັນຟົດຟື້ນ ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ດ້ວຍຜົນສຳເລັດຕາມລະຄາດໝາຍທີ່ວ່າງໄວ້.

ຂ່າວ-ພາບ: ທ ສົມພົດ ທຳມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*